ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1293 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 26.11.2020

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

- ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ. ✓
- ທ່ານ ເຈົ້າແຂວງໆ ອຸດົມໄຊ.
- ທ່ານ ເຈົ້າແຂວງໆ ຫຼວງນ້ຳທາ.

ກະຊວງອຸດສາຫະກຳ ແລະ ການຄ້າ
ຂາເຂົ້າ ເລກທີ 2348
ວັນທີ 30/11/20

ເລື່ອງ: ທິດຊີ້ນຳຕໍ່ການສະເໜີເປີດດ່ານທ້ອງຖິ່ນ ເພື່ອສົ່ງອອກສິນຄ້າໄປ ສປ ຈີນ ຢູ່ ແຂວງອຸດົມໄຊ ແລະ ແຂວງຫຼວງນ້ຳທາ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 3 ມີນາ 2017.
- ອີງຕາມໜັງສືສະເໜີ ຂອງແຂວງອຸດົມໄຊ ສະບັບເລກທີ 1340/ຈຂ.ອຊ, ລົງວັນທີ 9 ພະຈິກ 2020.
- ອີງຕາມໜັງສືສະເໜີ ຂອງບໍລິສັດສຸກສຳລານ ການຄ້າ ແລະ ບໍ່ແຮ່ຈຳກັດ ສະບັບເລກທີ 066/ສສລ.2020, ລົງວັນທີ 19 ພະຈິກ 2020.
- ອີງຕາມການລາຍງານການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ ຂອງຄະນະສະເພາະກິດ.
- ອີງຕາມທິດຊີ້ນຳ ຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພະຈິກ ໃນຄັ້ງວັນທີ 24 ພະຈິກ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳ ຂອງກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນພະຈິກ 2020 ມາຍັງທ່ານຊາບ ດັ່ງນີ້: ເຫັນດີໃຫ້ເປີດດ່ານທ້ອງຖິ່ນ ແມວຈາຍ (ພູຫຼັກຄຳ), ແຂວງອຸດົມໄຊ ແລະ ດ່ານທ້ອງຖິ່ນຊຽງກົກ, ແຂວງຫຼວງນ້ຳທາ ເພື່ອສົ່ງອອກສິນຄ້າກະສິກຳ ໄປ ສປ ຈີນ ສະເພາະ, ບໍ່ອະນຸຍາດໃຫ້ບຸກຄົນທົ່ວໄປເຂົ້າ-ອອກຜ່ານດ່ານດັ່ງກ່າວ ຢ່າງເດັດຂາດ. ມອບໃຫ້ອົງການປົກຄອງແຂວງຫຼວງນ້ຳທາ ແລະ ແຂວງອຸດົມໄຊ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ, ທັງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການລະບາດຂອງພະຍາດ COVID- 19 ຕາມຄະນະສະເພາະກິດຂັ້ນສູນກາງ ໄດ້ກຳນົດ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ຄຳເຈນ ວົງໂພສີ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຄະນະ ຫສນຍ, ທ່ານລະ | 01 ສະບັບ |
| - ສຳເນົາ | 01 ສະບັບ |